# ຄວາມເຊື່ອຜິດໆ

## ຕົວຢ່າງຄວາມເຊື່ອອື່ນໆເພີ່ມເຕີມ

| ລ.ດ | ຄວາມເຊື່ອ | ຄຳອະທິບາຍ |
|---|---|---|
| 1 | ເພດສຶກສາພາໃຫ້ເດັກເສຍຄວາມໄຮ້ດຽງສາ | ຂໍ້ມູນທີ່ໃຫ້ເຂົາເຈົ້າແມ່ນໃຫ້ຖືກເວລາ ແລະ ຖືກວິທີ. ໃນຄວາມເປັນຈິງ ເດັກຮັບຮູ້ຫຼາຍກວ່າທີ່ເຮົາຄິດ. ນອກນັ້ນ ເດັກບາງຄົນກໍ່ເລີ່ມມີເພດສຳພັນ ແລ້ວ. |
| 2 | ເພດສຶກສາອາດເປັນສິ່ງທີ່ດີສຳລັບໄວໜຸ່ມ ແຕ່ບໍ່ແມ່ນ ສຳລັບເດັກ. | ຂໍ້ມູນທີ່ໃຫ້ເຂົາເຈົ້າແມ່ນ ແທດເໝາະກັບອາຍຸ. ສຳລັບເດັກ ຈຸດປະສົງແມ່ນການສ້າງຄວາມເຂົ້າໃຈ, ເຄົາຣົບຮ່າງກາຍ ແລະ ຄວາມຮູ້ສຶກຂອງຕົນເອງ. ຂໍ້ມູນເຫຼົ່ານີ້ຈະກາຍເປັນພື້ນຖານເມື່ອເດັກເຕີບໃຫຍ່ຂຶ້ນຕາມລຳດັບ. |
| 3 | ເພດສຶກສາ ເປັນສິ່ງທີ່ສວນທາງກັບວັດທະນະທຳ ຫຼື ສາສະໜາຂອງເຮົາ. | ໄວໜຸ່ມໄດ້ຮັບແນວຄວາມຄິດໃໝ່ ແລະ ຂໍ້ມູນຜິດໆ ຢູ່ເລື້ອຍໆ ເຊັ່ນ ຈາກໂທລະສັບມືຖື. ວັດທະນະທຳເປັນສິ່ງທີ່ເຄື່ອນເໜັ່ງ ແລະ ຕ້ອງປັບຕົວໄປຕາມສະພາບທີ່ປ່ຽນແປງ. |
| 4 | ແມ່ຍິງທີ່ແຕ່ງງານແລ້ວບໍ່ສາມາດປະຕິເສດການມີເພດສຳພັນກັບຜົວຂອງຕົນເອງໃນເວລາທີ່ຜົວຂອງລາວຕ້ອງການເວລາໃດຫຼືວິທີໃດກໍ່ຕາມ. | ທຸກຄົນຄວນມີສິດຕັດສິນໃຈກ່ຽວກັບຮ່າງກາຍຂອງເຂົາເຈົ້າເອງ, ມັນຕ້ອງມີຂອບເຂດທີ່ໄດ້ຮັບການເຄົາລົບ, ລວມທັງສິດຈະປະຕິເສດການມີເພດສຳພັນເວລາທີ່ຜົວຕ້ອງການທຸກໆຄັ້ງ. ທັງຜົວເມຍມີສິດຮຽກຮ້ອງ ແລະ ມີສິດໃນການປະຕິເສດການມີເພດສຳພັນ ຫຼື ສາມາດທີ່ຈະປະຕິເສດການຮຽກຮ້ອງການມີເພດສຳພັນໃນທ່າ (ວິທີຕ່າງໆ) ທີ່ເຮົາບໍ່ສະດວກໃຈ, ສຳລັບຄູ່ຮັກທີ່ເປັນແຟນກໍ່ເຊັ່ນດຽວກັນ. |
| 5 | ຖ້າຫາກວ່າເອົາຂໍ້ມູນ  ຫຼື ໃຫ້ຂໍ້ມູນເລື່ອງການນຳໃຊ້ຖົງຢາງອະນາໄມໃຫ້ແກ່ໄວໜຸ່ມກໍ່ເທົ່າກັບວ່າສ້າງຄວາມສົນໃຈ ຫຼື ຊຸກຍູ້ເສື່ອມສອນໃຫ້ເຂົາເຈົ້າໄປມີເພດສຳພັນ. | ທຸກຄົນມີສິດທີ່ຈະຮັບຮູ້ຂໍ້ມູນທີ່ຖືກຕ້ອງກ່ຽວກັບ  ເພດສຳພັນ, ສຸຂະພາບຈະເລີນພັນ ເພື່ອຊ່ວຍໃຫ້ເຂົາເຈົ້າສາມາດຕັດສິນໃຈໃຫ້ແກ່ຕົນເອງຢ່າງຖືກຕ້ອງ. ຖ້າຫາກວ່າເຂົາເຈົ້າຮູ້ຂໍ້ມູນລາຍລະອຽດແຕ່ອາຍຸຍັງນ້ອຍມັນຈະຊ່ວຍໃຫ້ເຂົາເຈົ້າມີຄວາມຮັບຜິດຊອບ, ມີການຄຳນຶງເຖິງຄວາມສຸກທັງສອງຝ່າຍແລະຮູ້ວິທີປ້ອງກັນຕົວເອງແລະເຮັດໃຫ້ເຂົາເຈົ້າສາມາດຕັດສິນໃຈຢ່າງຖືກຕ້ອງກ່ຽວກັບທາງເພດ. |
| 6 | ແມ່ຍິງ ແລະ ເດັກຍິງມີຄວາມມັກ, ຄວາມຢາກ, ຄວາມສົນໃຈທາງເພດທີ່ຖືກກຳນົດໂດຍຄວາມຮູ້ສຶກຂອງເຂົາເຈົ້າໃນຂະນະທີ່ຄວາມຮູ້ສຶກທາງເພດຂອງຜູ້ຊາຍ ແລະ ເດັກຊາຍແມ່ນຖືກກຳນົດໂດຍຮໍໂມນ ແລະ ຮໍໂມນດັ່ງກ່າວເຮັດໃຫ້ເຂົາເຈົ້າມີຄວາມຕ້ອງການທາງເພດຫຼາຍກວ່າ. | ທຸກຄົນມີສິດທີ່ຈະສະແດງຄວາມຮູ້ສຶກ ແລະ ຄວາມຕ້ອງການທາງເພດ. ພຶດຕິກຳທາງເພດບໍ່ໄດ້ຂຶ້ນກັບຮໍໂມນເປັນຕົ້ນຕໍ ເພາະຮໍໂມນລະຫວ່າງຍິງ ແລະ ຊາຍມີສຳກັນ. ແຕ່ພຶດຕິກຳທາງເພດໄດ້ຖືກກຳນົດໂດຍສັງຄົມຫຼາຍກວ່າ. |

**ນີ້ເປັນຄວາມເຊື່ອພຽງບາງສ່ວນ, ທ່ານສາມາດສ້າງຄວາມເຊື່ອຂອງຕົນເອງເພີ່ມເຕີມນອກເໜືອຈາກນີ້ໄດ້, ແຕ່ຕ້ອງກວດເບິ່ງໃຫ້ໝັ້ນໃຈວ່າຂໍ້ມູນເຫຼົ່ານັ້ນຖືກຕ້ອງ.**